ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 2688/ທຄຕລ 2022
ນະຄອນຫຼວງວຽງຈັນ, ວັນທີ: 19 OCT 2022

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດທີ່ປຶກສາການກໍ່ສ້າງ ແລະ ຕົບແຕ່ງ ອາຄານສຳນັກງານ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາທີ່ປຶກສາຕິດຕາມໂຄງການກໍ່ສ້າງສູນສຳຮອງຂໍ້ມູນ ທຄຕລ (BCEL Data Center)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດທີ່ປຶກສາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາເປັນທີ່ປຶກສາຕິດຕາມໂຄງການກໍ່ສ້າງສູນສຳຮອງຂໍ້ມູນ ທຄຕລ (BCEL Data Center) ເຊິ່ງຕັ້ງຢູ່ບ້ານໂພນປ່າເປົ້າ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນໂດຍມີເນື້ອໃນດັ່ງນີ້:

## I. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:

1) ເອກະສານດ້ານລາຄາໃບປະເມີນລາຄາລວມອາກອນມູນຄ່າເພີ່ມ 7% ຕ້ອງເປັນສະກຸນເງິນກີບ 1 ຊຸດ
2) ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 01/12/2022) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ;
3) ໃບທະບຽນວິສາຫະກິດ;
4) ໃບອະນຸຍາດດຳເນີນທຸລະກິດປີ 2021 ຫຼື 2022;
5) ທຶນຈົດທະບຽນວິສາຫະກິດ 3 ຕື້ກີບຂຶ້ນໄປ;
6) ໃບຢັ້ງຢືນການເສຍອາກອນປີ 2020 ຫຼື 2021;
7) ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການກໍ່ສ້າງ ແລະ ຕົບແຕ່ງອາຄານ Data Center ແລະ ວຽກງານລະບົບ Data Center ຫຼື ອາຄານສຳນັກງານຫ້ອງການ 5 ຊັ້ນ ຫຼື ເປັນທີ່ປຶກສາໂຄງການໃນຫຼັກສະນະດຽວກັນ ຢ່າງໜ້ອຍ 3 ໂຄງການ.
   - ວັນອັງຄານ, ວັນທີ 01/11/2022, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດທີ່ປຶກສາຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 03 ຕຶກ C;
   - ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດເປັນທີ່ປຶກສາເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;
8) ເງື່ອນໄຂອື່ນໆມີເອກະສານ TOR ຄັດຕິດໃຫ້ນຳເອກະສານປະມູນ;

## II. ການພົວພັນ ແລະ ໄລຍະເວລາການປະຕິບັດວຽກ

1) ສາມາດສອບຖາມລາຍສະອຽດເພີ່ມເຕີມກ່ຽວກັບລາຍລະອຽດການເປັນທີ່ປຶກສາ ຫຼື ລົງສຳຫຼວດສະຖານທີ່ໂຄງການກໍ່ສ້າງຈາກວັນທີ 19/10/2022-28/10/2022, ໃນຊ່ວງເວລາ 08:30-11:30 ໂມງ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

2) ບໍລິສັດສາມາດພິວພັບເອົາເອກະສານ ເລີ່ມແຕ່ວັນທີ 19/10/2022-28/10/2022, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່, ລາຍລະອຽດເອກະສານປະກອບມີດັ່ງນີ້:
   - ໃບປະເມີນລາຍການໜ້າວຽກ 1 ຊຸດ (BoQ);
   - ແບບແຕ້ມການກໍ່ສ້າງ ພ້ອມສະເປັກວັດສະດຸ ແລະ ການດຳເນີນວຽກ
   - ເອກະສານເງື່ອນໄຂ ແລະ ຂອບເຂດໜ້າວຽກການເປັນທີ່ປຶກສາ (TOR)

3) ໄລຍະການເປັນທີ່ປຶກສາ 6 ເດືອນ (1/11/2022-30/4/2023).

III. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ**:

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 2% ຄືນ.

2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດທີ່ປຶກສາທີ່ຊະນະການປະມູນ.

3) ການຊຳລະເງິນຄ່າທີ່ປຶກສາຕາມສັດສ່ວນຂອງການປະຕິບັດວຽກແຕ່ລະໄລຍະພາຍໃນ 6 ເດືອນ.

IV. ແຈ້ງໃຫ້ບັນດາບໍລິສັດທີ່ໄດ້ຮັບເອກະສານກ່ຽວຂ້ອງຕ່າງໆກ່ຽວກັບໂຄງການກໍ່ສ້າງສູນສຳຮອງຂໍ້ມູນ ທຄຕລ (BCEL Data Center) ແມ່ນຫ້າມບໍ່ໃຫ້ເອົາໄປເຜີຍແຜ່ ຫຼື ເອົາເປັນແບບກໍ່ສ້າງໃຫ້ພາກສ່ວນອື່ນ ຖ້າລະເມີດຈະມີຄວາມຮັບຜິດຊອບທາງດ້ານກົດໝາຍຂອງ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກຳມະການ**
**ຈັດຊື້, ກໍ່ສ້າງ-ສ້ອມແປງ-ບໍລິການອື່ນໆ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

ຜູ້ປະສານງານ:

1) ທ່ານ ລະຄອນ ສິນນະວົງ 020 99720999
2) ທ່ານ ເພັດສະໝອນ ແສງຕະກຸນ 020 77467722